## ຈີນວຽດນາມແຂ່ງອິດທິພົນຍົນເອົາຊັພຍາກອນລາວ **<u>(ຕອນສອງ)</u>**

### ເພາະລາວບໍ່ມີປັນຍາຕອບໂຕ້ຂອງຄົນຕ່າງຊາດ

ການທີ່ຈີນໄຊ້ອິດທິພົນເພີ້ມສູງຂື້ນເລື້ອຍໆຢູ່ໃນລາວນັ້ນ ຍອ່ມສົ່ງຜົນກະທົບຕໍ່ສາຍສັມພັນອັນຍາວນານ ທີ່ລາວມີຢູ່ກັບວຽດນາມ ໂດຍທີ່ທັງຈີນກັບວຽດນາມຕ່າງກຳລັງຈັບຈອ້ງຕາເບິ່ງກັນ ຕໍ່ຊັພຍາກອນທັມຊາດແລະພລັງນ້ຳຂອງລາວ ຊຶ່ງນອກຈາກຢູ່ຢ່າງອຸດົມສົມບູນແລ້ວ ສວ່ນໃຫ່ຽຍັງບໍ່ໄດ້ຖືກແຕະຕອ້ງກ້ຳກາຍເທົ່າທີ່ຜ່ານມາ ວຽງຈັນຍັງຄົງໄດ້ຮັບຜົນດີ ດວ້ຍການສາ້ງຄວາມສົມດຸນຈາກການຮຸກຄືບຂອງເພື່ອນບາ້ນທັງສອງຊາດນີ້ ຕົງກັນຂາ້ມຈີນພວມຟື້ນຟູຄວາມສັມພັນທາງການທູດ ທີ່ເປັນປົກກະຕິກັບລາວໃນປີ-1988-ທີ່ວາ່ໃນຂນະນີ້ ກໍ່ກຳລັງເຣັ່ງຄວາມໄວເພື່ອຊົດເຊີຍເວລາທີ່ສູນເສັຽໄປ ຈີນສາມາດເພີ້ມອິດທິພົນບາຣະມີໃນລາວຂື້ນມາໄດ້ຢ່າງໃຫ່ຽໂຕກວາ້ງຂວາງຈາກການເຂົ້າກອບກູ້ເອົາປະເທດແລະຊັພຍາກອນນີ້ໃຫ້ໝົດຊິ້ນໄປໃນລາວ

ແຕ່ຕອ້ງໄຊ້ແຜນກອບກູ້ປະເທດນີ້ ໃຫ້ຈົ່ນພົນອັນຕຣາຍຂອງວິກິດການເງິນເອເຊັຽໃນປີ-1997-ດວ້ຍການເພີ້ມທັງຄວາມຊວ່ຍເຫລືອ ການລົງທຶນ ແລະການຄາ້ມາຕການໃຫ້ການອຸດໜຸນຢ່າງໃຈກວາ້ງຂອງສັນຕິພາບພາຍນອກ ແຕ່ພາຍໃນຕອ້ງເຊື່ອງໄວ້ ໃນການແກ່ການສົ່ງອອກຂອງລາວ ຕຣອດຈົ່ນການໃຫ້ເງິນກູ້ປອດດອກເບັ້ຽ ໄດ້ຊວ່ຍທຳໃຫ້ຄາ່ເງິນກີບຂອງລາວທີ່ເຊື່ອມຊຸດ ຣອບຣາບກັບມີສະຖຽຣະພາບຂື້ນມາ

ຫລັງຈາກນັ້ນກໍ່ໄດ້ມີການລົງນາມ ຂໍ້ຕົກລົງທະວິພາຄີສະບັບຕ່າງ ໆອີກເປັນຊຸດໂດຍຄອບຄຸມທັງດາ້ນຄວາມຮວ່ມມືທາງເສຖກິດແລະເທກນິກ ການພັທນາໂຄງສາ້ງພື້ນຖານຕຣອດຈົ່ນການລົງທຶນແລະການທະນາຄານໃນປີ-2000-ປະທານາທິບໍດີຈຽງເຈີ໋ໝິນເດີນທາງໄປຢ້ຽມລາວ ຊຶ່ງນັບເປັນການຢ້ຽມປະເທດນີ້ຄັ້ງແຣກ ຂອງປະມຸກແຫ່ງຣັຖຂອງຈີນອີກທັງເປັນການແຜ່ຖາງທາງໃຫ້ແກ່ການແລກປ່ຽນ ການຢ້ຽມຢືອນຣະຫວາ່ງເຈົ້າໜາ້ທີ່ຣະດັບສູງຂອງຣັຖບານປະເທດທັງສອງນີ້ ຕາມຣາຍງານຂອງຊິ່ມວນຊົນຈີນ ເມື່ອປີ-2003-ປັກກິ່ງໄດ້ຍົກໜີ້ທີ່ລາວຕິດຄາ້ງຢູ່ເປັນຈຳນວນ-1,700-ລາ້ນດອນລາ

ຄວາມສົນໃຈຂອງຈີນທີ່ມີຕໍ່ລາວນັ້ນ ໃນຄວາມສຳຄັນແລ້ວເປັນເຣື້ອງທາງເສຖກິດທັງໃນແງ່ຂອງການທີ່ລາວເປັນແຫລ່ງຊັພຍາກອນທັມຊາດ ແລະເປັນຊອ່ງທາງລຳລຽງຂົນສົ່ງສິນຄາ້ອຸດສາຫະກັມຂອງຕົນ ໄປຍັງເອເຊັຽຕາວັນອອກສຽງໄຕ້ ນັກລົງທຶນຂອງຈີນ ມີຄວາມກຽ່ວຂອ້ງເປັນຢ່າງຫລາຽ ກັບໂຄງການໂຮງໄຟຟາ້ພລັງນ້ຳແລະເຄື່ອນຫຼາຽໆແຫ່ງ ທີ່ກຳລັງສາ້ງກັນຢູ່ໃນລາວຮວ່ມທັງທີ່ຢູ່ໃນຂັ້ນວາງແຜນຢ່າງເລີກລັບ

ກໍ່ຍັງມີອີກຫລາຽໂຄງການ ເຣື້ອງເໝືອງແຮ່ກໍ່ເປັນພື້ນທີ່ການລົງທຶນທີ່ສຳຄັນເຊັ່ນກັນ ໂດຍ
ທີ່ລາວໄດ້ໃຫ້ສັມປະທານແກ່ນັກລົງທຶນຈີນໄປແລ້ວ ທັງດ້ານການທຳເໝືອງທອງແດງ ເຫລັກ
ໂປແຕສຊຸ່ມ ແລະບອກໄຊ ກິດຈະການກະເສດກັມເພື່ອການພານິດກໍ່ເໝືອນກັນຈີນໄດ້
ທຳການລົງທຶນໄປຫລາຽທີ່ດຽວໃນການຜລິດເຂົ້າໂພດມັນສຳປະຫລັງ ອ້ອຍ ແລະຢາງພາ
ຣາໃນພື້ນທີ່ຕອນເໜືອຂອງລາວ ເພື່ອການສົ່ງອອກກັບໄປແດນມັງກອນ ນາຍຍົງຈັນທະລັງ
ສີ ໂຄສົກຣັຖບານລາວຊີ້ວ່າ ເທກໂນໂລຍີໃໝ່ໆ ມະເລັດພັນໃໝ່ໆ ຕຣອດຈົນຮອດຕຣາດ
ໃໝ່ໆ ທີ່ການລົງທຶນຂອງຈີນເອົາເຂົ້າມານັ້ນ ທຳໃຫ້ຄວາມສັມພັນຣະຫວ່າງກັນກະເຕື້ອງ
ດີຂຶ້ນ ແລະການເປີດແຂວງທາງພາກເໜືອທັງ -6 -ແຂວງເຫລົ່ານີ້ໃຫ້ແກ່ຈີນ ເປັນທີ່ກໍ່
ໃຫ້ເກີດຜົນປະໂຍດໃຫ້ແກ່ຈີນໃນທັນທີ ເພາະຈີນຈະມີການຄ້າສອງທາງໃນເວລານີ້ ມີມູນ
ຄ່າຢູ່ໃນຣະດັບ -249ລ້ານດອນລາໃນປີ2007 -ນີ້ ແຕ່ກໍ່ເປັນທຳນອງດຽວກັນກັບວຽດນາມ
ທີ່ມາທັກຫລັງລາວໃນຈັງຫວະສວນຢາງໃນເຂດພາກໄຕ້ຂອງລາວເຊົ່າບໍ່ຈ່າຍເງິນ ຝ່າຍຈີນ
ສະແດງຄວາມຫວັງວ່າການຊື້ຂາຍແບບທະວິພາຄີຈະພຸ່ງທະລຸຣະດັບ -1,000 ລ້ານດອນ
ລາ ພາຍໃນເວລາບໍ່ກີປີຂ້າງໜ້າ ຕາມຂໍ້ມູນຂອງຄນະກັມການເພື່ອການວາງແຜນແລະການ
ລົງທຶນຂອງລາວນັ້ນການລົງທຶນໂດຍຕົງຈາກຈີນມີມູນຄ່າຣວມ -1,100-ລ້ານດອນລາໃນ
ເດືອນສິງຫາຄົມປີ -2007 -ນີ້ ຊຶ່ງຕົວເລຂນີ້ຈະທຳໃຫ້ຈີນຍັງຄົງ ເປັນນັກລົງທຶນໃຫ່ຽອັນ
ດັບສອງໃນລາວຮອງລົງມາຈາກໄທຍນາຍຍົງຈັນທະລັງສີ ກ່າວວ່າລາວຕ້ອງການເຂົ້າ
ຮ່ວມການລົງທຶນກັບຈີນ ເພາະລາວກຽດຊັງວຽດນາມທີ່ບໍ່ມີຄວາມກະຈ່າງແຈ້ງຕໍ່ລາວມາ
ນານແລ້ວ ຣະຫວ່າງທີ່ນາຍົກຣັຖມົນຕຣີເວິນເຈັຽເປົ່າຂອງຈີນ ມາຢ້ຽມກຸງວຽງຈັນເມື່ອ
ເດືອນມີນາຄົມທີ່ຜ່ານມາ ໃນຈັງຫວະເວລາກັບທີ່ເຂົາເຂົ້າມາປະຊຸມຣະດັບຜູ້ນຳ ຂອງປະ
ເທດໃນພູມິພາກລຸ່ມແມ່ນຳໂຂງຢູ່ແລ້ວ ທັງສອງປະເທດໄດ້ລົງນາມກັນໃນຂໍ້ຕົກລົງຣວມ -7 -
ສະບັບຊຶ່ງມີຕັ້ງແຕ່ຂໍ້ຕົກລົງທາງດ້ານເສຖກິດເທກໂນໂລຍີ ພລັງງານ ແລະໂຄງການເຄືອ
ຂ່າຍຄອມພິວເຕີພາກຣັຖຈີນຍັງສເນີໃຫ້ສິນເຊື້ອເພື່ອຊື້ຍວດຍານແລະເຣດິຕອບເຕ ຈາກ
ແດນມັງກອນເປັນມູນຄ່າ -100 -ລ້ານດອນລາ ນອກຈາກນັ້ນຍັງມີເງິນກູ້ຈາກຈີນເພື່ອຊ່ວຍ
ເຫລືອການຈັດຕັ້ງຣັຖວິສະຫະກິດ ລາວ ເທເລຄອມ ຄອມປານີແລະລາວເອເຊັຽເທເລຄອມ
ການຈັດຕັ້ງໂຄງການເຄືອຂ່າຍຄອມພິວເຕີຂອງນວ່ຍງານຣັຖບານຕຣອດຈົ່ນການຊື້ເຄື່ອງ
ບິນ ໃຫ້ແກ່ສາຍການບິນ ລາວເອວິເອຊັ່ນພວກຈີນນັ້ນເຂົາໃຫ້ຄວາມສົນໃຈເປັນພິເສດແກ່
ການພັທນາເຄືອຂ່າຍຖນົນທີ່ກຳລັງຂຍາຍຕົວໄປຢ່າງຣວດເຣວໃນພາກເໜືອຂອງລາວ
ຍອນລາວບໍ່ມີຄວາມສາມາດເພາະຫລົງກົນຂອງວຽດນາມ ການຊອັມແຊມ

ບູຣະນະເສັ້ນທາງໝາຍເລຂ -3-ທີ່ເຊື່ອມຕໍ່ຣະຫວ່າງເມືອງຈິ່ງຫົງໃນມົນທົນຫຍຸນໝານ(ຍຸນ ນານ)ຂອງຈີນ ຜ່ານດິນແດນລາວໄປຈົນເຖິງເມືອງຫວັຍຊາຍຊຶ່ງຢູ່ຟັ່ງຕົງຂ້າມອຳເພີຊຽງ ຂອງຈັກຫວັດຊຽງຣາຍຂອງໄທຍໄດ້ເສດສິ້ນແລ້ວເມື່ອຕົ້ນປີນີ້ ຂນະທີ່ການສ້າງຂົວຂ້າມ ແມ່ນ້ຳໂຂງ(ຊຶ່ງຈີນເປັນຜູ້ອອກເງິນທຶນ)ເພາະລາວບໍ່ເຊື່ອໃຈວຽດນາມຈຶ່ງຫວງຫາເຄືອຂ່າຍ ສາຍປະຕິວັດເກົ່າ ຍອັນວຽດນາມທຳຄວາມຊົ່ວຮ້າຍມາຫລາຍແລ້ວ ເພາະສະນັ້ນລາວຈຶ່ງ ຫວງຫາສະຫາຍເພື່ອນແດງ ເພື່ອໃຫ້ເສັ້ນທາງນີ້ເສດສິ້ນສົມບູນແບບ ກໍ່ຄາດໝາຍກັນວ່າຈະ ເຣີ່ມໄດ້ໃນປາຍປີນີ້ ໂຄງການບູຣະນະຖນົນສາຍນີ້ເປັນສວ່ນນຶ່ງຂອງການພັທນາ ເຂດພື້ນ ທີ່ເສຖກິດເໜືອໄຕ ໃນພູມີພາກລຸ່ມແມ່ນ້ຳໂຂງທີ່ເຊື່ອມຕໍ່ຈີນ ລາວ ແລະໄທຍ ຈີນຄາດຫວັງ ວ່າເສັ້ນທາງສາຍນີ້ຈະທຳໃຫ້ຕົນເອງສາມາດ ຂົນສົ່ງສິນຄ້າຜ່ານໄທຍໄປຍັງສວ່ນອື່ນໆ ຂອງ ເອເຊັຽຕາວັນອອກສຽງໄຕ້ ໄດ້ຢ່າງມີປະສິດທິພາບຍິ່ງຂຶ້ນ ຮວມທັງທຳໃຫ້ມີທາງຕໍ່ເຊື່ອມກັບ ທ່າເຮືອຣິມທະເລຂອງໄທຍຫລາຍຂຶ້ນດວ້ຍ

(ອຳນາດແບບນອ່ນນອກແຂງໃນ ເພື່ອບໍ່ໃຫ້ລາວຮູ້ຕົວ) ຢ່າງໄດກໍ່ດີ ໄຊ້ວ່າການລົງທຶນ ຂອງຈີນທັງເປີດຈະເປັນໄປເພື່ອການພານິດລວ້ນໆ ທັງນີ້ໄດ້ມີການໄຊ້ຄວາມພະຍາຍາມ ຕຣອດຈົ່ນເຖິງເງິນທອງຈຳນວນຫາຍທີ່ດຽວ ໄປໃນໂຄງການທີ່ເປັນການສ້າງອຳນາດອິດທິ ພົນແບບອອ່ນນອກ ວິທີການປັກກິ່ງໃຫ້ເງິນສນັບສນູນການກໍ່ສ້າງ-ທໍ ວັທນະທັມແຫ່ງຊາດ ຂອງລາວເປັນມູນຄ່າ-7-ລ້ານດອນລາ-ຖນົນ central avenue ຄວາມຍາວ-13-ກິໂລແມດ ການບູຣະນະອະນຸສາວະຣີປະຕູໄຊແລະສວ່ນຮອບ ໆ ໃນກຸງວຽງຈັນ ນອກຈາກນີ້ແດນມັງ ກອນຍັງສ້າງໂຮງພະຍາບານມິຕພາບຈີນ-ລາວຂຶ້ນທີ່ຊານເມືອງຫລວງພຣະບາງ ນະຄອນ ຫລວງເກົ່າໃນເວລານີ້ກາຍເປັນເມືອງທອ້ງທ່ຽວອັນສຳຄັນ ຍິ່ງກວ່ານັ້ນຈຳນວນຜູ້ປະຕິບັດ ງານຂອງພັກ ພປປລທີ່ໄປຮັບການອົບຮົມແລະເຂົ້າຮວ່ມການສັມນາໃນຈີນກໍ່ກຳລັງເພີ້ມຂຶ້ນ ເຣື້ອຍໆ ໂດຍຈຳນວນຫລາຍທີ່ສຸດໄປທີ່ເມືອງຄຸນໝິງເມືອງຫລວງຂອງມົນທົນຫຍຸນໝານ ຂນະດຽວກັນກໍ່ມີທຶນການສຶກສາຈຳນວນເພີ້ມຂຶ້ນທີ່ໃຫ້ແກ່ນັກສຶກສາລາວ ເພື່ອໄປຮຽນໃນ ແດນມັງກອນ ສິ່ງສາຍສຳຄັນຫລາຍກໍ່ຄືຈາກສາຍສັມພັນທາງເສຖກິດເກົ່ານີ້ ຈີນໄດ້ເຕີມຕໍ່ ດຳເນີນໂຄງການຣິເຣີ່ມຍຸທສາດຕໍ່ລາວຊຶ່ງບາງຄົນເຫັນວ່າອາດຈະກາຍເປັນພັຍຄຸກຄາມ ຕໍ່ຖານະຂອງວຽດນາມ ໂດຍເມື່ອໄວໆມານີ້ຈີນໄດ້ເພີ້ມການຕິດຕໍ່ຣະຫວ່າງກອງທັບປົດປອ່ຍ ປະຊາຊົນລາວກັບກອງທັບປົດປອ່ຍແຫ່ງປະຊາຊົນຈີນຂນະທີ່ຈຳນວນນາຍທະຫານລາວ ທີ່ ໄດ້ຮັບການຝຶກອົບຮົມໃນຈີນກໍ່ເພີ້ມຂຶ້ນເຊັ່ນກັນ ຍອ່ນຈີນຕອ້ງການໄດ້ມີອຳນາດຢູ່ລາວ ເພື່ອ ຂັບເຄື່ອນກຳລັງຂບວນປົດປອ່ຍປະຊາຊົນລາວອອກຈາກອຳນາດວຽດນາມ

ຕາມການສຶກສາຂອງນັກວິເຄາະລາວພາຍໃນຫລາຍທ່ານ ທີ່ມີການປະສົບປະການຜ່ານມາ ງົບປະມານທາງການທະຫານຂອງລາວ ໄດ້ຂຍາຍຕົວເພີ້ມຂື້ນຢ່າງສມ່ຳສເມີໃນຣະຍະກີ່ປີທີ່ຜ່ານມາ ແລະບໍ່ຕອ້ງສົງສັຍເລີຍວ່າຣັຖບານລາວຍອມຕະໜັກດີວ່າຈາກການທີ່ຈີນມີອຸດສາຫະກັມດາ້ນອາວຸດຂນາດມະຫຶມາ ຣວມທັງປັກກິ່ງກໍ່ສາທິດໃຫ້ເຫັນເຈຕນາຣົມ ທີ່ຈະແລກປຮ່ນອາວຸດຍຸທພັນກັບສັມປະທານຜົນປະໂຍດທາງການພານິດຈຶ່ງຍອ່ມເປັນການດີ ກວ່າທີ່ຈະດຳເນີນການປັບປຸງກອງທັບຂອງຕົນໃຫ້ທັນສມັຍ ໂດຍອາສັຍການມີສັມພັນທີ່ໄກ້ຊິດກັບຈີນແທນທີ່ຈະເປັນວຽດນາມບໍ່ແມ່ນ ເພາະລາວບໍ່ໄວ້ເນື້ອເຊື່ອໃຈວຽດນາມໄປແລ້ວ ຢ່າງໄດກໍ່ຕາມບໍ່ໄຊ້ທຸກໆ ຄົນຫລອກທີ່ເປັນສຸກກັບບົດບາດທີ່ເພີ້ມພູນຂື້ນມາຂອງຈີນຂນະທີ່ຊາວລາວຈຳນວນຫລາຍຍີນດີຈະໄດ້ໄຊ້ສິນຄາ້ອຸດສາຫະກັມຂອງຈີນທີ່ມີຣາຄາຖືກກົ່ວຂອງປະເທດອື່ນໆພວກເຂົາກໍ່ອາດວ່າຈະກະຕືຣືຣົ້ນສເມີໄປຕໍ່ສິ່ງທີ່ບາງຄົນເຫັນວ່າຄືການໄຫລທະລັກເຂົ້າມາ ຫລາຍຂື້ນທຸກທີຂອງຜູ້ອົພຍົບຊາວຈີນ ຕຣອດຈົ່ນການທີ່ຈີນກຳລັງມີອິດທິພົນເພີ້ມຂື້ນໃນຣັຖບານລາວ ຄວາມຫວາດກົວຂອງຄົນລາວຕໍ່ການຮຸກຮານ ເຂົ້າເທື່ອລະນອ້ຍໆຂອງຄົນຈີນຄົນວຽດນາມ ບາງທີອາດຈະມີການສແດງອອກມາໃຫ້ເຫັນຊັດເຈນທີ່ສຸດຈາກສຽງຄັດຄາ້ນບໍ່ເຫັນດວ້ຍຕໍ່ການ ທີ່ຣັຖບານປະກາດໃຫ້ສິດທິທຳປະໂຍດ ໃນທີ່ດິນຜືນໃຫ່ຽທີ່ບໍຣິເວນໄກ້ໆ ວັດທາດຫລວງອັນສັກສິດຂອງກຸງວຽງຈັນແກ່ນັກລົງທຶນຊາວຈີນຂນະທີ່ການໃຫ້ສິດທິໄຊ້ທີ່ດິນດັ່ງກ່າວເບິ່ງເໝືອນຈະເປັນການແລກປຮ່ນກັບທີ່ຝ່າຍຈີນຈະກໍ່ສາ້ງສູນສນາມກິຝາອັນສົມບູນແລະທັນສມັຍແຫ່ງໃໝ່ເພື່ອໄຊ້ຈັດການແຂ່ງຂັນກິຝາຊີເກມໃນປີ 2009-ທີ່ລາວເປັນເຈົ້າພາບ ແຕ່ການດຳເນີນການໃນເຣື້ອງນີ້ເບິ່ງຈະສາ້ງຄວາມຄຽດແຄ້ນກຮ່ວໃຫ້ແກ່ໃຜບາງຄົນພາຍໃນພັກ ພປປລ ທີ່ບໍ່ໄດ້ມີສວ່ນຮັບຮູ້ນຳໃນການຂໍ້ຕົກລົງຄາວນີ້ຍອ່ນວ່າໄດ້ມີພັກການເມືອງລຸ້ນການປະຕິວັດໃນອະດີດບໍ່ພໍໃຈແລະເຖິງແມ່ນຣັຖບານຈະໄດ້ໄຊ້ຄວາມພະຍາຍາມຢ່າງໜັກໜວ່ງ ເພື່ອກຳຈັດຂາ່ວລືກຮ່ວກັບເຣື້ອງນີ້ ມັນກໍ່ຍັງຄົງມີລືກັນຢູ່ເຣື້ອຍໆ ບໍ່ຢຸດຢອ່ນ ຍອ້ນຣັຖບານບໍ່ເງີຍໜາ້ຫານັກການປະຕິວັດເກົ່າ ໃນຄັ້ງນຶ່ງອະດີດປະທານາທິບໍດີ ໄກສອນ ພົມວິຫານຂອງລາວເຄີຍກ່າວໄວ້ວ່າພູເຂົາຖລົ່ມທລາຍສາຍນ້ຳອາດເຫືອດແຫ້ງແຕ່ຄວາມສັມພັນລາວ -ວຽດນາມຈະໝັ້ນຍືນຕຣອດການນີ້ອາດຈະເປັນຄວາມຈິງສືບເນື່ອງຈາກເຫດຜົນທາງພູມີສາດພໍໆກັບທາງປະວັດສາດທີ່ວ່າການແຂ່ງຂັນຣະຫວ່າງຈີນກັບກັບວຽດນາມເພື່ອມີອິດທິພົນໃນລາວເພາະສະນັ້ນລາວຈຶ່ງໄດ້ຢູ່ໃນກະທໍຂອງສອງອຳນາດນີ້ຕຣອດມາເໝືອນໄກ່ ກໍ່ກຳລັງເປັນໄປຢ່າງເຂັ້ນຂັນແລະພໍ້ຈົ່ນເຖິງເວລານີ້ຍັງອອກຈາກກະທໍບໍ່ໄດ້ລາວຍັງໄດ້ປະໂຍດຢ່າງງົດງາມແຕ່ໃນຖາ້ນກາງອັນມືດມົວດວ້ຍການສາ້ງຄວາມສົມດຸນຈາກການຮຸກຮານຂອງເພື້ອນບາ້ນທັງສອງນີ້ຍອ້ນວ່າທັງສອງປະເທດຈະໃຫ້ລາວຊຸ້ນຊາດດວ້ຍ